ສາຂ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0569 /ກປ

ນະຄອນຫຼວງວຽງຈັນ, ວັນທີ 11 . 5 . 2010

ກົມປ່າໄມ້
ຊາ ເລກທີ 1455
ລົງວັນທີ 21-5-10

# ແຈ້ງການ

ເຖິງ: ທ່ານຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ການຜັນຂະຫຍາຍດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 180/ນຍ, ລົງວັນທີ 7 ກໍລະກົດ 2009 ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ.

- ອີງຕາມ ໝວດທີ່ III ມາດຕາ 7 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 180/ນຍ, ລົງວັນທີ 7 ກໍລະກົດ 2009 ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ;
- ອີງຕາມ ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2151/ ອຄ.ກຂອ, ລົງວັນທີ 30 ຕຸລາ 2009 ກ່ຽວກັບສິນຄ້າຄວບຄຸມທີ່ຕ້ອງຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກແບບບໍ່ອັດຕະໂນມັດຂອງ ສປປ ລາວ.

ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານການນຳເຂົ້າສິນຄ້າຈາກຕ່າງປະເທດ, ການສົ່ງອອກສິນຄ້າຂອງ ສປປ ລາວ ເວົ້າລວມ, ເວົ້າສະເພາະແມ່ນບັນດາສິນຄ້າທີ່ນຳເຂົ້າ ແລະ ສົ່ງອອກທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງກະສິກຳ ແລະ ປ່າໄມ້ ເຊັ່ນ: ການນຳເຂົ້າຈັກຕັດໄມ້, ເລື່ອຍໂສ້, ລວມທັງສິ້ນສ່ວນປະກອບ - ອຸປະກອນເພື່ອປະກອບເຂົ້າໃນຈັກຕັດໄມ້, ໄມ້ທ່ອນ, ໄມ້ແປຮູບທຸກຊະນິດທີ່ຕັດມາຈາກທຳມະຊາດ ແລະ ຈາກສວນປູກໃຫ້ຖືກຕ້ອງຕາມລະບຽບຫຼັກການ, ມີການຄຸ້ມຄອງຢ່າງຮັດກຸມ ແລະ ສອດຄ່ອງກັບສະພາວະຄວາມເປັນຈິງ.

## ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ອອກແຈ້ງການ ດັ່ງນີ້:

1. ໃຫ້ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ເອົາໃຈໃສ່ຕິດຕາມ ແລະ ຄຸ້ມຄອງຢ່າງເຂັ້ມງວດໃນການຈັດຕັ້ງປະຕິບັດການນຳເຂົ້າສິນຄ້າທີ່ຕ້ອງໄດ້ຂໍອະນຸຍາດໃຫ້ນຳເຂົ້າ ເຊັ່ນ: ການນຳເຂົ້າຈັກຕັດໄມ້, ເລື່ອຍໂສ້, ລວມທັງສິ້ນສ່ວນປະກອບ - ອຸປະກອນເພື່ອປະກອບເຂົ້າໃນຈັກຕັດໄມ້ ຕາມທີ່ໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍຂອງ

ແຈ້ງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2151/ອຄ.ກຂອ, ລົງວັນທີ 30 ຕຸລາ 2009 ກ່ຽວກັບສິນຄ້າຄວບຄຸມທີ່ຕ້ອງຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກແບບບໍ່ອັດຕະໂນມັດຂອງ ສປປ ລາວ ໃນໂຮແມັງທີ I (ສິນຄ້າຄວບຄຸມທີ່ຕ້ອງຂໍອະນຸຍາດນຳເຂົ້າ), ຂໍ້ທີ 2 ສິນຄ້າທີ່ຕ້ອງໄດ້ຂໍອະນຸຍາດນຳເຂົ້າໃນຕາຕະລາງເລກລຳດັບທີ 13 ແລະ 18 ທັງນີ້ກໍເພື່ອຄວບຄຸມການລັກລອບຕັດໄມ້ທຳລາຍປ່າ, ຮັກສາແຫຼ່ງຊັບພະຍາກອນທຳມະຊາດ ແລະ ປ້ອງກັນການລັກລອບຕັດໄມ້ຕາມແນວຊາຍແດນລະຫວ່າງປະເທດ;

2. ໃຫ້ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ເອົາໃຈໃສ່ຕິດຕາມ ແລະ ຄຸ້ມຄອງຢ່າງເຂັ້ມງວດໃນການຈັດຕັ້ງປະຕິບັດການສົ່ງອອກສິນຄ້າທີ່ເກືອດຫ້າມ ເຊັ່ນ: ການສົ່ງອອກໄມ້ທ່ອນ ແລະ ໄມ້ແປຮູບທຸກຊະນິດທີ່ຕັດອອກຈາກປ່າທຳມະຊາດຕາມທີ່ໄດ້ລະບຸໄວ້ໃນໂຮແມັງທີ II (ສິນຄ້າຄວບຄຸມທີ່ຕ້ອງຂໍອະນຸຍາດສົ່ງອອກ), ຂໍ້ທີ 1 ໃນຕາຕະລາງເລກລຳດັບທີ 3 ທັງນີ້ກໍເພື່ອປ້ອງກັນການລັກລອບຕັດໄມ້ທຳລາຍປ່າຕາມແນວຊາຍແດນລະຫວ່າງ ສປປ ລາວ ກັບປະເທດໃກ້ຄຽງ. ສຳລັບການສົ່ງອອກໄມ້ທ່ອນ ແລະ ໄມ້ແປຮູບທຸກຊະນິດທີ່ຕັດອອກຈາກສວນປູກນັ້ນ ຕ້ອງໄດ້ຕິດຕາມ ແລະ ຄຸ້ມຄອງຢ່າງເຂັ້ມງວດກ່ອນອະນຸມັດໃຫ້ສົ່ງອອກຕາມທີ່ໄດ້ລະບຸໄວ້ໃນ ໂຮແມັງທີ II (ສິນຄ້າຄວບຄຸມທີ່ຕ້ອງຂໍອະນຸຍາດສົ່ງອອກ), ຂໍ້ທີ 2 ໃນຕາຕະລາງເລກລຳດັບທີ 8 ທັງນີ້ກໍເພື່ອຄວບຄຸມການສົ່ງອອກແບບຜິດກົດໝາຍ;

3. ມອບໃຫ້ ກົມປ່າໄມ້ ແລະ ກົມກວດກາປ່າໄມ້ ເປັນເຈົ້າການໃນການຕິດຕາມສະພາບການຈັດຕັ້ງປະຕິບັດແຈ້ງການສະບັບນີ້, ພ້ອມທັງສະຫຼຸບສັງລວມຈາກບັນດາແຂວງ ແລະ ນະຄອນຫຼວງວຽງຈັນແລ້ວລາຍງານໃຫ້ການນຳກະຊວງຊາບເປັນປົກກະຕິ;

4. ມອບໃຫ້ບັນດາພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ຈັດຕັ້ງເຜີຍແຜ່ ແລະ ແນະນຳວິທີການຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງລະອຽດໃຫ້ແກ່ທຸກພາກສ່ວນທີ່ກ່ຽວຂ້ອງໃນການນຳເຂົ້າ ແລະ ສົ່ງອອກບັນດາສິນຄ້າທີ່ເກືອດຫ້າມ, ສິນຄ້າທີ່ຕ້ອງໄດ້ຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ເພື່ອໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ. ເສ

ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້

ສິຕາເຮັ້ງ ຣາຊະພົນ

**ບ່ອນນຳສົ່ງ:**

- ຫ້ອງວ່າການສູນກາງພັກ 1 ສະບັບ (ເພື່ອລາຍງານ);
- ຫ້ອງການສຳນັກງານນາຍົກລັດຖະມົນຕີ 1 ສະບັບ (ເພື່ອລາຍງານ);
- ຫ້ອງການຄະນະເລຂາທິການລັດຖະບານ 1 ສະບັບ (ເພື່ອລາຍງານ);
- ກະຊວງອຸດສາຫະກຳ ແລະ ການຄ້າ 1 ສະບັບ (ເພື່ອຊາບ);
- ກົມປ່າໄມ້, ກົມກວດກາປ່າໄມ້ ກົມລະ 1 ສະບັບ (ເພື່ອຕິດຕາມ);
- ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ພາກສ່ວນລະ 1 ສະບັບ (ເພື່ອປະຕິບັດ);
- ເກັບມ້ຽນ 1 ສະບັບ